# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 13 ກໍຣະກະດາ 2008 ( 07-13-2008 )

---

## ການຕໍ່ສູ້ພຣະຄຣິດເດ? ເປັນແນວໃດ?

**ຂໍ້ພຣະຄັມພີໃນບົດຮຽນ:** (ພຣະນິມິດ 13:1-14:13)
**ຄໍາຖາມແຫ່ງຊີວິດ:** ພວກຕໍ່ຕ້ານພຣະຄຣິດຈະເຮັດຫຍັງ?
**ຄວາມຈິງໃນພຣະຄັມພີ:** ພວກຕໍ່ຕ້ານພຣະຄຣິດຈະນໍາພາໄປນະມັສການຊາຕານ, ຂັດຂວາງພຣະເຈົ້າ, ແລະ ທໍາການທາລຸນຜູ້ທີ່ເຊື່ອທັງຫລາຍ.
**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍທ່ານໃຫ້ດໍາຣົງຊີວິດໃຫ້ສໍາເຣັດຜົນດ້ວຍການເຊື່ອຟັງ ໂດຍ:

- ການເຂົ້າໃຈວ່າພວກຕໍ່ຕ້ານພຣະຄຣິດຈະເຮັດຫຍັງ, ແລະ
- ການກໍາຈັດການຕໍ່ຕ້ານຂອງມານໃນທຸກຮູບແບບ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນໍາຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນໍາໄປສອນ
4. ອ່ານ "<u>ແຜນການສອນ</u>", ຫມາຍບ່ອນສໍາຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສໍາເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈໍານວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສໍາຣວດຈໍານວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈໍາ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄໍາພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນໍາ:</u>**

- ນໍາພານັກຮຽນໃຫ້ມີຄວາມສົນໃຈໃນປະໂຍກນີ້ຄື: "**ການດໍາຣົງຊີວິດທີ່ສໍາເຣັດດ້ວຍການເຊື່ອຟັງ**"
  ອະທິບາຍ: ເຣື່ອງພື້ນຖານຂອງຕຶກທີ່ຢູ່ພາຍໃຕ້ສິດອໍານາດຂອງພຣະເຢຊູ,
- ບັດຮຽນໃນມື້ນີ້ເປັນການສໍາຣວດກວດກາເບິ່ງການທໍາງານຂອງມານຊາຕານໃນຄາວສຸດທ້າຍ: ພວກຕໍ່ຕ້ານພຣະເຢຊູຄຣິດ. ພວກເຮົາເຕີບໃຫຍ່ຂຶ້ນມາຖ້າງກາງມານຊາຕານ. ເປັນການສໍາຄັນທີ່ພວກເຮົາໄດ້ເຂົ້າໃຈວ່າພວກຕໍ່ຕ້ານພຣະຄຣິດນັ້ນເປັນແນວໃດ.
  ຮຽກຮ້ອງໃຫ້ນັກຮຽນເອົາໃຈໃສ່ຕໍ່ຄໍາຖາມແຫ່ງຊີວິດໃນອາທິດນີ້: " ພວກຕໍ່ຕ້ານພຣະຄຣິດ

ຈະເຮັດຫຍັງ?

1. <u>ມະນຸດຜູ້ປະຊາສໍາພັນຂອງຊາຕານ</u>: ພຣະນິມິດ 13:1-6)

- ຂໍໃຫ້ນັກຮຽນອາສາສມັກອ່ານ (ພຣະນິມິດ 13:1-6)
- ຄໍາອະທິບາຍ: ແມ່ນ ຫລືບໍ່ສິ່ງເຫລົ່ານີ້ເກີດຂຶ້ນໃນປະຈຸບັນ ຫລືໃນຄາວສຸດທ້າຍ, ເຣື່ອງຂອງມານຊາຕານທີ່ມີຣິດອໍານາດ. ພວກເຮົາຈະບໍ່ຫລັບຫູ ຫລັບຕາໃຫ້ມານຊາຕານຫລອກລວງພວກເຮົາໄດ້ໃນທຸກດ້ານ.
- ຄໍາຖາມ: ແມ່ນຫຍັງທີ່ບັນດາຜູ້ທີ່ເຊື່ອຈະຕ້ອງໄດ້ເຫັນໃນການແຕ່ງຕັ້ງຜູ້ທີ່ມີຄວາມເຊື່ອຢ່າງສຸດຈິດສຸດໃຈໃນຄາວສຸດທ້າຍ? ໃຫ້ເວລານັກຮຽນຄົ້ນຄວ້າໃນເຣື່ອງນີ້. ທ່ານຈະຈັດຕຽມການຕໍ່ຕ້ານການຫລອກລວງຂອງມານຮ້າຍຢ່າງໃດ? ທ່ານຈະແລ່ນໜີຈາກພຣະເຈົ້າ ຫລືຈະແລ່ນເຂົ້າຫາພຣະອົງ?
- ເພື່ອເພີ້ມເຕີມໃນພຣະທັມພຣະນິມິດຂໍ້ 13 ໃຫ້ເຂົ້າໃຈຕື່ມ ໃຫ້ໜູນໃຈນັກຮຽນໄປອ່ານພຣະທັມ ເຮັບເຣີ ບົດທີ 10 ຊຶ່ງເປັນແຜນການນໍາທາງໃຫ້ພວກເຮົາຮູ້ຈັກການກະທໍາຂອງມານຮ້າຍ.
- ຈັດຫາເຄື່ອງຈັກ ຫລືຂອງຫລິ້ນທີ່ມີສຽງລົບກວນປະສາດ (ເຊັ່ນເກມ ຫລືໂມງປຸກ) ມາ.
  ຂຽນຄໍາພິພາກສານີ້ໃສ່ກະດານ: " ການເວົ້າຈາໃສ່ຮ້າຍປ້າຍສີເປັນຄໍາໝິ່ນປມາດຕໍ່ຕ້ານ______.
  (ພຣະເຈົ້າ) .
- ໃຫ້ຜູ້ນຶ່ງອາສາສມັກອ່ານຂໍ້ທີ 6 ແຮງໆ ທີ່ເປັນການໝິ່ນປມາດພຣະເຈົ້າ. ໜູນໃຈນັກຮຽນໃຫ້ປັບປຸງນິສັຍໃຈຄໍ, ແລະການກະທໍາໃຫ້ໄດ້ອອກຈາກສິ່ງທີ່ໄດ້ຍິນໄດ້ເຫັນຈາກໂລກນີ້ ຢ່າໄດ້ເອົາມາໃສ່ໃຈ.

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (ພຣະນິມິດ 13:1-6)

1. ໃນເມື່ອທ່ານໄດ້ອ່ານຂໍ້ທີ 1 ແລ້ວມີຫຍັງເຂົ້າມາໃນຄວາມຄິດຂອງທ່ານ?
2. ທ່ານເຊື່ອວ່າສັດຮ້າຍເຫລົ່ານັ້ນເປັນລັກສະນະດີ ຫລືເປັນມານຮ້າຍ?
3. ຄວາມໝາຍຂອງການປິ່ນປົວບາດແຜຂອງຫົວສັດຮ້າຍໃນຂໍ້ທີ 3 ນັ້ນແມ່ນໝາຍເຖິງຫຍັງ?
4. ເປັນດ້ວຍເຫດໃດທົ່ວແຜ່ນດິນໂລກຈຶ່ງມີຄວາມປລາດໃຈ?
5. ໃນເມື່ອທ່ານໄດ້ອ່ານເຣື່ອງສັດຮ້າຍນີ້ແລ້ວທ່ານມີຄວາມຮູ້ສຶກຢ່າງໃດທີ່ມັນໄດ້ກ່າວຄໍາໝິ່ນປມາດຕໍ່ສູ້ພຣະເຈົ້າ?
6. ເປັນຫຍັງການກ່າວໝິ່ນປມາດຕໍ່ສູ້ພຣະເຈົ້າຈຶ່ງຖືວ່າເປັນການເຮັດບາບ?

2. <u>ການປົກຄອງຊ່ວງສຸດທ້າຍອັນປລາດ</u> (ພຣະນິມິດ 13:7ຂ-8, 16-18)

- ຂໍໃຫ້ນັກຮຽນອາສາສມັກອ່ານ ພຣະທັມ ພຣະນິມິດ 13:7ຂ-8, 16-18
- ອະທິບາຍເຖິງສັດຮ້າຍໂຕທີສອງຢ່າງຫຍໍ້ໆທີ່ໂຜ່ຂຶ້ນມາໃນລັກສະນະຄ້າຍໂຕທີນຶ່ງ,
  ແຕ່ "ເຄື່ອງໝາຍຂອງສັດຮ້າຍນີ້" ຢູ່ໃນການຍອມຮັບຂອງສັດໂຕທີນຶ່ງ.
- ໃຫ້ນໍາພານັກຮຽນສົນທະນາຂອງຜົນປໂຍດໃນການນະມັສການພຣະເຈົ້າອົງທ່ຽງແທ້.
- ໃຫ້ນັກຮຽນເວົ້າເຖິງການທີ່ເຂົາເຈົ້າຮູ້ຈັກວ່າຊື່ຂອງເຂົາເຈົ້າໄດ້ບັນທຶກໄວ້ໃນປຶ້ມແຫ່ງຊີວິດແລ້ວ ເຂົາເຈົ້າມີຄວາມຮູ້ສຶກຢ່າງໃດ.
- ໃຫ້ເອົາສະແຕມທີ່ມີຮູບ ທີ່ເປັນຮູບໜ້າຮັກ ແລະນຸ່ມນວນໄປຈ້ໍາໃສ່ຝາມືເບື້ອງຂວາຂອງນັກຮຽນແຕ່ລະຄົນແລ້ວຖາມວ່າ: ສະແຕມທີ່ມີຮູບຢູ່ໃນມືຂອງທ່ານໄດ້ເຮັດໃຫ້ທ່ານມີຄວາມຮູ້ສຶກຢ່າງໃດ?

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u>** (ພຣະນິມິດ 13:7-8, 16-18)

1. ໃນຂໍ້ທີ 7ຂ, ແມ່ນໃຜເປັນຜູ້ຕາງໜ້າຂອງຄົນທຸກງຊົນຊາດຊົນເຜົ່າ ທຸກພາສາ ແລະທຸກຊາດ? ດ້ວຍຄວາມຫວັງອັນໃດທີ່ທຸກຄົນສາມາດຕ້ານທານສັດຮ້າຍນັ້ນໄດ້?
2. ຕາມການບັນທຶກໄວ້ໃນຂໍ້ທີ 16-18 ນັ້ນ, ແມ່ນຫຍັງທີ່ເປັນການສະແດງແຖິງເຄື່ອງໝາຍ ຫລືຕາປະທັບຂອງສັດຮ້າຍເຫລົ່ານັ້ນ?
3. ທ່ານຈະໃຊ້ພລັງອັນພິເສດຂອງທ່ານເພື່ອໃຫ້ເວົ້າແຕ່ຄໍາດີງ ແທນການເວົ້າຊົ່ວໄດ້ຢ່າງໃດ?
4. ທ່ານຈະໃຫ້ມືຂວາຂອງທ່ານ ຫລືໜ້າຜາກຂອງທ່ານປະທັບຕາດ້ວຍກັນກັບສັດຮ້າຍຊຶ່ງຫລອກລວງນັ້ນບໍ່?
5. ແມ່ນຫຍັງທີ່ເປັນຢາແກ້ພິດເຄື່ອງໝາຍນັ້ນ?

## 3. <u>ຜູ້ຂົ່ມເຫັງ:</u> (ພຣະນິມິດ 13:7ກ,9-10)

- ຂໍໃຫ້ອາສາສມັກອ່ານພຣະທັມ ພຣະນິມິດ 13:7ກ, 9-10
- ສະແດງເຖິງສອງກິຈກັມໃຫຍ່ໆ ຂອງຂອງພວກຕໍ່ສູ້ພຣະຄຣິດ ແລະຂຽນໄວ້ໃນກະດານ:ຜູ້ທີ່ຂົ່ມເຫັງບັນດາຜູ້ທີ່ເຊື່ອ ແລະທໍາລາຍຜູ້ທີ່ເຊື່ອ.ໃຫ້ພິຈາຣະນາເບິ່ງສອງການກະທໍານີ້, ວ່າມີໃຜແດ່ທີ່ເຄີຍປະເຊີນມາແລ້ວ ທີ່ບາງຄົນກໍຖືກຂ້າໂດຍເຫດຜົນທີ່ເຂົາເຈົ້າມາເຊື່ອໃນພຣະເຈົ້າ.

**<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u>** (ພຣະນິມິດ 13:7ກ, 9-10)

1. ໃນບົດຮຽນນີ້ ມີທາງໃດອີກແດ່ທີ່ຊາຕານໄດ້ເວົ້າໃຫ້ມະນຸດເຊື່ອຖືມັນ? (ການງານ; ຜູ້ທີ່ທົດລອງພຣະເຢຊູ; ແລະຊຶ່ງເປໂຕໄດ້ທໍານວາຍການປະຕິເສດເອົາໄວ້ລ່ວງໜ້າແລ້ວ). ຜົນສຸດທ້າຍ ແມ່ນໃຜເປັນຜູ້ໄດ້ຊັຍຊະນະ?
2. ໃນເມື່ອທ່ານໄດ້ອ່ານຂໍ້ຄວາມເຫລົ່ານີ້ແລ້ວ, ໃນຈິດສໍານຶກຂອງທ່ານໄດ້ເຮັດໃຫ້ທ່ານເຊື່ອເຣື່ອງພົມລິຂິດ ຫລືໂຊກຊາຕາຂອງໂລກ, ຫລືເຮັດໃຫ້ທ່ານໄດ້ເຊື່ອໝັ້ນວ່າເປັນການກະທໍາຂອງອົງພຣະຜູ້ເປັນເຈົ້າ ຫລືຢ່າງອື່ນ?
3. ທ່ານຈະເວົ້າເຣື່ອງຄວາມເຊື່ອຖືໃນເວລາທີ່ໄດ້ຮັບຄວາມທຸກຍາກລໍາບາກໄດ້ຢ່າງໃດ?
4. ຄວາມເຊື່ອຂອງທ່ານໄດ້ຢູ່ໃນຣະດັບໃດໃນບົດຮຽນນີ້?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ສິດອໍານາດຂອງນັກການເມືອງ ແລະທະຫານລ້ວນແລ້ວແຕ່ເປັນການສ່ຽງຕໍ່ອັນຕະລາຍຂອງຊາຕານ ແລະພວກຊົ່ວຮ້າຍ.
- ຊາຕານໄດ້ໃຊ້ເຄື່ອງມືຂອງທະຫານ ແລະເສຖກິດເພື່ອຫລອກລວງ ແລະຂົ່ມເຫັງຄົນທັງຫລາຍ.
- ໃນເວລາສຸດທ້າຍ ພວກຕໍ່ສູ້ພຣະຄຣິດຈະຂຶ້ນມາໃຊ້ອໍານາດຢ່າງຊົ່ວຮ້າຍມາດົນໃຈນັກການເມືອງ, ການທະຫານ, ແລະເສຖກິຈມາຕໍ່ສູ້.
- ຊາຕານໃຊ້ນັກການເມືອງ ແລະທະຫານມາບັງຄັບຫລອກລວງປະຊາຊົນໃຫ້ອອກຈາກຫົນທາງຂອງພຣະຄຣິດເຈົ້າ.
- ພຣະເຈົ້າໃຫ້ອໍານາດຈໍາກັດໃນການຂຍາຍ ແລະລະຍະເວລາຂອງຄວາມຊົ່ວຮ້າຍ, ທັງສອງຢ່າງນີ້ກໍາລັງຈະສິ້ນສຸດລົງແລ້ວ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )